# ໂຮງຮຽນວັນອາທິດ

## ວັນອາທິດທີ 16 ກໍຣະກະດາ 2017 (07- 16- 2017)

# ກ່ອນສິ່ງອື່ນໃດ

ແມ່ນຫຍັງທີ່ທ່ານຕ້ອງລຽນແຖວລໍຖ້າດົນທີ່ສຸດ?

**ຈຸດສໍາຄັນຂອງບົດຮຽນ**: ໃຫ້ພຣະເຈົ້າຊົງເປັນທີນຶ່ງຕລອດເວລາ.

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ມີທາງນຶ່ງທີ່ຈະຮູ້ແມ່ນຫຍັງເປັນສິ່ງສໍາຄັນຕໍ່ຝູງຊົນ ເມື່ອເຂົາເຈົ້າພົບວ່າເປັນເວລາດົນປານໃດທີ່ເຂົາເຈົ້າໄດ້ຢືນລຽນແຖວເພື່ອລໍຖ້າບາງສິ່ງບາງຢ່າງ. ຈົ່ງຄິດເຖິງເວລາທີ່ທ່ານຢືນຢູ່ໃນແຖວເປັນເວລາດົນ; ທ່ານໄປລົງຄະແນນສຽງເລືອກຕັ້ງ? ລໍຖ້າຊື້ສິນຄ້າ? ລໍຖ້າຊື້ກາເຟ? ທ່ານໄດ້ຢືນຢູ່ໃນແຖວເພາະທ່ານເຫັນວ່າມັນສໍາຄັນສໍາລັບທ່ານ.

ເມື່ອສິ່ງທີ່ເປັນນຶ່ງສັບປົນຄົນເລກັນ ກໍເໝືອນຊີວິດທີ່ອອກໄປຈາກແຖວ. ສ່ວນຫຼາຍແລ້ວ ການເຮັດທີ່ບໍ່ຕົງກັບຄວາມຕ້ອງການເກີດຂຶ້ນເພາະເຮົາເປັນຄົນເຫັນແກ່ຕົວ ການເຫັນແກ່ຕົວນີ້ເອງເຮັດໃຫ້ເຮົາບໍ່ຮູ້ວ່າແມ່ນຫຍັງເປັນທີນຶ່ງ.

ກ່ອນນັ້ນພວກເຮົາສາມາດເຫັນສິ່ງທີ່ເປັນນຶ່ງຢ່າງຖືກຕ້ອງ, ພວກເຮົາຕ້ອງເຂົ້າໃຈວ່າອັນໃດທີ່ພຣະເຈົ້າກໍານົດໃຫ້ເປັນທີນຶ່ງ. ພຣະປະສົງຂອງພຣະອົງຕ້ອງມາກ່ອນເປັນອັນດັບນຶ່ງ. ເມື່ອພວກເຮົາໃຫ້ສິ່ງທີ່ເປັນນຶ່ງຂອງພຣະເຈົ້າມາກ່ອນ, ພວກເຮົາຈະພົບກັບຄວາມເພິ່ງພໍໃຈອັນໃຫຍ່ຫລວງແລະບັນລຸຜົນສໍາເຣັດ.

ພວກເຮົາຈະເຂົ້າໄປໃນແຖວເພື່ອຈະຮັບເອົາສິ່ງທີ່ພຣະເຈົ້າຢາກໃຫ້ເຮົາ ຢ່າງໃດ? ຮັກກາຍ 1: 2-13 ຊ່ວຍເຮົາໃຫ້ເຂົ້າໃຈໃນການຈັດອັນດັບຄວາມເປັນນຶ່ງຂອງເຮົາກັບຄວາມເປັນນຶ່ງຂອງພຣະເຈົ້າຢ່າງໃດ? ເຣື່ອງລາວໃນບົດຮຽນນີ້ຈະເປີດເຜີຍໃຫ້ເຮົາເຫັນວ່າພຣະເຈົ້າຊ່ວຍຄົນທັງຫລາຍໃຫ້ປ່ຽນແປງຄວາມເຫັນແກ່ຕົວຢ່າງຕັ້ງໃຈຢ່າງໃດ ແລະໃຫ້ພຣະປະສົງຂອງພຣະອົງມາກ່ອນ ເປັນທີນຶ່ງ.

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2 ແລະ 3 )

## <u>ສຶກສາພຣະຄັມພີ</u>

### 1. <u>ຮັກກາຍ 1:2-8:</u>

*2ພຣະຜູ້ເປັນເຈົ້າແຫ່ງຈັກກະວານກ່າວດັ່ງນີ້ວ່າ ປະຊາຊົນເຫລົ່ານີ້ກ່າວວ່າ "ເວລານັ້ນຍັງບໍ່ມາເຖິງ ຄືເວລາທີ່ຈະສ້າງ*
*ພຣະວິຫານຂອງພຣະຜູ້ເປັນເຈົ້າ" 3ແລ້ວພຣະທັມຂອງພຣະຜູ້ເປັນເຈົ້າຈຶ່ງມາເຖິງໂດຍທາງຮັກກາຍຜູ້ປະກາດພຣະທັມ*
*ວ່າ 4"ເຖິງເວລາແລ້ວທີ່ພວກເຈົ້າຈະຢູ່ໃນເຮືອນທີ່ມີໄມ້ປູຂອງພວກເຈົ້າ ເວລາທີ່ພຣະວິຫານນີ້ມ້າງເພພັງແລ້ວ ແມ່ນຫຼື*
*ບໍ່"? 5ບັດນີ້ ພຣະຜູ້ເປັນເຈົ້າແຫ່ງຈັກກະວານຈຶ່ງກ່າວວ່າ "ຈົ່ງເອົາໃຈໃສ່ພິຈາຣະນາເບິ່ງວ່າເຈົ້າມີຄວາມເປັນຢູ່ຢ່າງໃດ?*
*6ເຈົ້າຫວ່ານຫລາຍ ແຕ່ເກັບກ່ຽວໜ້ອຍ ເຈົ້າຮັບປະທານແຕ່ບໍ່ເຄີຍອີ່ມ, ເຈົ້າດື່ມແຕ່ກໍບໍ່ເຄີຍເຊົາຢາກ ເຈົ້ານຸ່ງຫົ່ມແຕ່ກໍ*
*ບໍ່ມີຜູ້ໃດອົບອຸ່ນ, ຜູ້ທີ່ໄດ້ຄ່າຈ້າງ ກໍໄດ້ຄ່າຈ້າງມາໃສ່ຖົງທີ່ຮົ່ວ. 7ພຣະຜູ້ເປັນເຈົ້າແຫ່ງຈັກກະວານກ່າວດັ່ງນີ້ວ່າ "ຈົ່ງເອົາ*
*ໃຈໃສ່ພິຈາຣະນາເບິ່ງວ່າ ເຈົ້າມີຄວາມເປັນຢູ່ຢ່າງໃດ? 8ຈົ່ງຂຶ້ນໄປເທິງໂນນພູ ແລະເອົາໄມ້ມາກໍ່ສ້າງພຣະວິຫານແລະ*
*ເຮົາຈະມີຄວາມພໍໃຈດ້ວຍການນັ້ນ ແລະເຮົາຈະໄດ້ຮັບກຽດ; ອົງພຣະຜູ້ເປັນເຈົ້າຊົງກ່າວດັ່ງນັ້ນ.*

ສັດຕະວັດທີ 5 ກ່ອນ ຄສ ເປັນຊ່ວງເວລາຄວາມສິ້ນຫວັງຂອງອິສຣາເອນໃນປະວັດສາດ. ອານາຈັກທີ່ດາວິດປົກ ຍິ່ງໃຫຍ່ ແລະການປົກຄອງຂອງໂຊໂລໂມນພັງທະລາຍ. ປະຊາຊົນຢິວໄດ້ຖືກເນຣະເທດອອກຈາກຖິ່ນຖານຂອງເຂົາເຈົ້າ ເມື່ອບາບີໂລນພ່າຍແພ້ຕໍ່ກອງທັບເປີເຊັຽ. ເຖິງຢ່າງໃດກໍຕາມ, ກະສັດໄຊຣັສຍອມຮັບການຕັດສິນໃຈຂອງໄພ່ພົນຂອງພຣະເຈົ້າເພື່ອກັບໄປສ້າງກຸງເຢຣູຊາເລັມ(ເອັຊະຣາ 1: 1- 4 ).

ໃນການກັບເມືອຂອງເຂົາເຈົ້ານັ້ນ ເຂົາເຈົ້າເຫັນແຕ່ການທຳລາຍມ້າງເພຢ່າງສິ້ນເຊີງ. ກຳແພງເພພັງ, ພຣະວິຫານຖືກທຳລາຍ. ທັງໆທີ່ເຂົາເຈົ້າມີຄວາມທໍ້ຖອຍໃຈ ແຕ່ເຂົາເຈົ້າຍັງເຊື່ອຟັງພຣະເຈົ້າແລະເລີ່ມຕົ້ນສ້າງພຣະວິຫານ(ເອັຊະຣາ 3: 8 ). ເຂົາເຈົ້າໄດ້ເກັບຫີນເກັບປູນທຳຄວາມສະອາດແລະວາງຮາກຖານພຣະວິຫານ. ຫຼັງຈາກນັ້ນສອງສາມປີ, ເຖິງແມ່ນວ່າເຂົາເຈົ້າໝົດອຸປະກອນການກໍ່ສ້າງ. ເຂົາເຈົ້າປະເຊີນໜ້າກັບຄູ່ຕໍ່ສູ້ຈາກຝ່າຍກົງກັນຂ້າມ, ແລະຢຸດການກໍ່ສ້າງບາງສ່ວນໃນຣາຊການຂອງກະສັດໄຊຣັສ.

ກັບມາຫາຮັກກາຍ. ພວກເຮົາບໍ່ຮູ້ຈັກຫຼາຍປານໃດກ່ຽວກັບຮັກກາຍ, ນອກຈາກດາຣິອຸດຂຶ້ນເປັນກະສັດປົກຄອງຫຼັງຈາກກະສັດໄຊຣັສ, ຮັກກາຍໄດ້ຮັບໃຊ້ໃນຖານະເປັນຜູ້ປະກາດພຣະທັມຂອງພຣະເຈົ້າ. ຊຶ່ງເປັນໜ້າທີ່ຮັບຜິດຊອບຂອງຮັກກາຍທີ່ຈະບອກກັບປະຊາຊົນວ່າເຂົາເຈົ້າຕ້ອງຫັນກັບມາເຊື່ອຟັງພຣະເຈົ້າອີກ ດ້ວຍການເລີ້ມສ້າງພຣະວິຫານໃຫ້ສຳເຣັດ.

ໃນການຕັກເຕືອນປະຊາຊົນຂອງຮັກກາຍ, ພວກເຮົາໄດ້ຮຽນຮູ້ສອງຂໍ້ກຸນແຈກ່ຽວກັບການເຊື່ອຟັງພຣະເຈົ້າໃນການຈັດລຳດັບວ່າອັນໃດມາກ່ອນ ເປັນທີ່ນຶ່ງໃນຄວາມຕ້ອງການຂອງເຮົາ:

- **ການລ້າຊ້າໃນການເຊື່ອຟັງແມ່ນການບໍ່ເຊື່ອຟັງ.** ປະຊາຊົນໃຊ້ເຫດຜົນໂດຍອ້າງວ່າມັນແມ່ນພຣະປະສົງຂອງພຣະເຈົ້າບໍ ທີ່ຈະໃຫ້ສ້ອມແປງພຣະວິຫານໃນເວລານີ້. ເຂົາເຈົ້າເຮັດຜິດ. ໂດຍຊັກຊ້າໃນການສ້າງພຣະວິຫານ, ພວກເຂົາບໍ່ເຊື່ອຟັງຄຳສັ່ງຂອງພຣະອົງ.
- **ສິ່ງທີ່ເປັນນຶ່ງຂອງເຮົາເຮັດໃຫ້ເພິ່ງພໍໃຈໜ້ອຍກວ່າສິ່ງທີ່ເປັນນຶ່ງຂອງພຣະເຈົ້າສເມີ.** ພຣະເຈົ້າໄດ້ບອກປະຊາຊົນໃຫ້ "ຄິດຢ່າງລະວັງ" ກ່ຽວກັບສິ່ງທີ່ເຂົາເຈົ້າຈະເຮັດ. ດັ່ງນັ້ນພຣະອົງໄດ້ຊີ້ໃຫ້ເຫັນວ່າເຂົາເຈົ້າຈະບໍ່ມີຄວາມພໍໃຈ ບໍ່ວ່າອັນໃດທີ່ເຂົາເຈົ້າເຮັດ, ເພາະເຂົາເຈົ້າພຽງແຕ່ເຮັດໃນສິ່ງທີ່ຄິດວ່າອັນໃດມີຄວາມສຳຄັນຕໍ່ເຂົາເຈົ້າ. ໃນເຣື່ອງນີ້ ໃຈຄວາມສຳຄັນກໍຄືຄວາມບາບຂອງເຮົາ. ພວກເຮົາຄອຍແຕ່ຊອກຫາຄວາມສົນໃຈຂອງຕົນເອງ, ບໍ່ແມ່ນພຣະປະສົງຂອງພຣະເຢຊູ( ຟີລິບປອຍ 2: 21 ). ແຕ່ແມ່ນການສແວງຫາຜົນປໂຍດຂອງພຣະຄຣິດທີ່ເຮັດໃຫ້ພວກເຮົາພົບກັບຄວາມເພິ່ງພໍໃຈອັນໃຫຍ່ຫລວງ.

## 2. <u>ຮັກກາຍ 1:9-11</u>:

*9 ເຈົ້າທັງຫລາຍຫວັງໄດ້ຫລາຍ ແຕ່ເບິ່ງແມ ໄດ້ແຕ່ໜ້ອຍດຽວ ແລະເມື່ອເຈົ້າໄດ້ເອົາມາໃນເຮືອນຂອງເຈົ້າ ເຮົາກໍເປົ່າມັນໄປ " ພຣະຜູ້ເປັນເຈົ້າແຫ່ງຈັກກະວານຊົງກ່າວວ່າເປັນຫຍັງຈຶ່ງເປັນຢ່າງນັ້ນ? ກໍເພາະວິຫານຂອງເຮົາຖືກເພພັງຢູ່ ແຕ່ຝ່າຍພວກເຈົ້າຕ່າງກໍວຸ່ນຢູ່ກັບເຣື່ອງເຮືອນຂອງຕົນ 10 ເພາະເຫດນີ້ ທ້ອງຟ້າທີ່ຢູ່ເໜືອເຈົ້າຈຶ່ງຫ້າມນ້ຳໝອກໄວ້ແລະດິນກໍຢຶດພືດຜົນຂອງມັນໄວ້ 11 ເຮົາໄດ້ເອີ້ນຄວາມແຫ້ງແລ້ງມາສູ່ແຜ່ນດິນ ແລະສູ່ໂນນພູ, ສູ່ເຂົ້າ, ນ້ຳອະງຸ່ນໃໝ່ ແລະນ້ຳມັນ, ສູ່ຜົນລະປູກທີ່ມາຈາກດິນ, ສູ່ມະນຸດ ແລະສັດ ແລະຜົນງານທັງໝົດຊຶ່ງເຮັດໄວ້ດ້ວຍມື"*

ປະຊາຊົນໃນສມັຍຂອງຮັກກາຍມີຄວາມຄາດຫວັງສູງ. ຄວາມຄາດຫວັງນີ້ໄດ້ພັງທະລາຍລົງເມື່ອເຂົາເຈົ້າຖືກຕໍ່ຕ້ານຈາກຝ່າຍກົງກັນຂ້າມ ເຂົາເຈົ້າຢຸດການກໍ່ສ້າງພຣະວິຫານ. ຊີວິດຂອງເຂົາເຈົ້າໄດ້ຕົກຕ່ຳລົງໄປຊັກໄຊ້ ເມື່ອເຂົາເຈົ້າໂຈະວຽກງານຂອງເຂົາເຈົ້າໄວ້ ສິ່ງຜົນໃຫ້ເຂົາເຈົ້າບໍ່ເອົາໃຈໃສ່ຕໍ່ພຣະປະສົງຂອງພຣະເຈົ້າ. ເຂົາເຈົ້າຄິດວ່າຍັງມີເວ

ລາຫລາຍພຽງພໍ ການສ້ອມແປງພຣະວິນຫານເອົາໄວ້ເຮັດນຳຫລັງກໍໄດ້, ແຕ່ພຣະເຈົ້າຢາກໃຫ້ເຂົາເຈົ້າລົງມືເຮັດໂດຍບໍ່ຊັກຊ້າ.

ດັ່ງທີ່ພວກເຮົາເຫັນໃນຂໍ້ 9-11, ພວກເຮົາຈະລົ້ມເຫລວເມື່ອພວກເຮົາໄປກ່ອນພຣະເຈົ້າ. ເມື່ອພວກເຮົາໃຫ້ຕົນເອງເປັນທີນຶ່ງ ພວກເຮົາບໍ່ສາມາດເຫັນພຣະປະສົງຂອງພຣະເຈົ້າ. ເມື່ອປະຊາຊົນຢຸດເພັ່ງເບິ່ງສິ່ງທີ່ເປັນທີນຶ່ງຂອງພຣະເຈົ້າ. ພຣະອົງກໍເຮັດບາງສິ່ງເພື່ອດຶງຄວາມສົນໃຈຂອງເຂົາເຈົ້າ. ເຮັດໃຫ້ຝົນເຊົາຕົກ, ພື້ນດິນກໍບໍ່ເກີດພືດຜົນ. ແນ່ນອນປະຊາຊົນໃນກຸງເຢຣູຊາເລັມເກີດມີຄວາມກັງວົນໃຈ: ແມ່ນຫຍັງເກີດຂຶ້ນ? ພວກເຮົາເຮັດວຽກຢ່າງໜັກ, ແຕ່ພຣະເຈົ້າບໍ່ປະທານສິ່ງໃດໃຫ້ເລີຍ. ເປັນດ້ວຍເຫດໃດໜໍ?

ພຣະເຈົ້າຕອບວ່າ: "ເພາະວິຫານຂອງເຮົາຍັງເພພັງຢູ່, ແຕ່ຝ່າຍພວກເຂົາຕ່າງກໍວົນຢູ່ກັບເຣື່ອງເຮືອນຂອງຕົນ.“ ເປັນໜ້າຫົວ, ປະຊາຊົນສົນໃຈແຕ່ໃນຕົວເອງ ເຮັດວຽກໜັກແຕ່ບໍ່ເກີດຜົນ ເພາະພຣະເຈົ້າເອົາອອກໄປຈາກເຂົາເຈົ້າໃນສິ່ງທີ່ເຂົາເຈົ້າສແວງຫາໂດຍເຫັນແກ່ປໂຍດສ່ວນຕົວ.

ໃນທາງກົງກັນຂ້າມ, ເມື່ອໃຫ້ພຣະເຈົ້າເປັນທີນຶ່ງ, ພຣະອົງຊົງປະທານສິ່ງທີ່ຈຳເປັນໃຫ້ແກ່ເຮົາ. ໃນການເທສນາຂອງພຣະເຢຊູທີ່ຈ້າຍພູ, ພຣະອົງສອນພວກເຮົາເຣື່ອງກຸນແຈແຫ່ງຣາຊອານາຈັກ: “ແຕ່ກ່ອນອື່ນ, ທ່ານທັງຫລາຍຈົ່ງສແວງຫາຣາຊອານາຈັກຂອງພຣະເຈົ້າ ແລະຄວາມຊອບທັມຂອງພຣະອົງ ແລະພຣະອົງຈະຊົງເພີ້ມເຕີມສິ່ງທັງປວງເຫລົ່ານີ້ໃຫ້ແກ່ທ່ານ( ມັດທາຍ 6:33). ເມື່ອພຣະເຢຊູເປັນພຣະຜູ້ເປັນເຈົ້າໃນຊີວິດພວກເຮົາ, ເຮົາກໍຈະບໍ່ລົ້ມເຫລວ. ແນ່ນອນ, ເຮົາອາດຈະເສັຽເງິນຍ້ອນຕລາດຮຸ້ນຕົກ. ພວກເຮົາອາດຈະບໍ່ຊະນະກິລາແກວ່ງບານ ຖ້າທີມຂອງເຮົາຫຼິ້ນບໍ່ດີ. ແລະພວກເຮົາທຸກຄົນຈະເສັຽຊີວິດເພາະຄວາມຕາຍໃນເວລາໃດເວລານຶ່ງ. ແຕ່ຢ່າງໃດກໍຕາມ, ສຳລັບທຸກຄົນທີ່ຢູ່ໃນພຣະຄຣິດ ພວກເຮົາຈະໄດ້ກຳໄລ. ການສູນເສັຽໃນໂລກນີ້ບໍ່ສາມາດປຽບທຽບກັບການໄດ້ກຳໄລໃນສວັນ ທີ່ເຮົາໄດ້ຮັບໃນພຣະອົງ.

ຊົນຊາດອິດສຣາເອນທີ່ສ້ອມແປງພຣະວິຫານໄດ້ພາດຈາກຈຸດນີ້. ເຂົາເຈົ້າມີຄວາມສັບສົນວ່າແມ່ນສິ່ງໃດແທ້ທີ່ເປັນນຶ່ງ ຄວນເຮັດກ່ອນ, ແລະຄວາມຮ້ອນຮົນໃຈຖືກນຳໄປໃນທາງຜິດ. ແທນທີ່ເຂົາເຈົ້າຈະສຸມໃຈໃສ່ໃນພຣະເຈົ້າກ່ອນ ແຕ່ເຂົາເຈົ້າກັບສົນໃຈໃນຕົວເອງ. ເຂົາເຈົ້າລົ້ມເຫລວເພາະເຂົາເຈົ້າບໍ່ໃຫ້ພຣະເຈົ້າເປັນທີນຶ່ງ. ຂອບຄຸນພຣະເຈົ້າ, ທີ່ປະວັດສາດຂອງເຂົາເຈົ້າບໍ່ຈົບລົງກັບຄວາມລົ້ມເຫລວ. ໃນພຣະຄຳຕອນຕໍ່ໄປໄດ້ສະແດງໃຫ້ເຫັນວ່າ ເຂົາເຈົ້າໄດ້ຕອບສນອງຕໍ່ພຣະເຈົ້າແລະພຣະເຈົ້າກໍໄດ້ຕອບສນອງເຂົາເຈົ້າຄືນ.

## 3. <u>ຮັກກາຍ 1:12-13</u>:

*12 ແລ້ວເຊຣູບາເບນ ລູກຊາຍເຊອານຕິເອນ ແລະໂຢຊວຍ ລູກຊາຍເຢໂຮຊາດັກມະຫາປະໂຮຫິດພ້ອມ ກັບປະຊາຊົນ*
*ທັງປວງທີ່ເຫລືອຢູ່ກໍໄດ້ເຊື່ອຟັງພຣະສຸຣະສຽງຂອງພຣະຜູ້ເປັນເຈົ້າພຣະເຈົ້າຂອງພວກເຂົາ ແລະຖ້ອຍຄຳຂອງຮັກກາຍ*
*ຜູ້ປະກາດພຣະທັມ ເພາະວ່າພຣະຜູ້ເປັນເຈົ້າ ພຣະເຈົ້າຂອງພວກເຂົາທັງຫລາຍໄດ້ໃຊ້ເພິ່ນມາ ແລະປະຊາຊົນກໍຢຳ*
*ເກງຕໍ່ພຣະພັກພຣະຜູ້ເປັນເຈົ້າ 13 ແລ້ວຮັກກາຍຜູ້ສົ່ງຂ່າວຂອງພຣະຜູ້ເປັນເຈົ້າຈຶ່ງກ່າວແກ່ປະຊາຊົນຕາມຄຳສັ່ງຂອງ*
*ພຣະຜູ້ເປັນເຈົ້າວ່າ “ພຣະຜູ້ເປັນເຈົ້າກ່າວວ່າເຮົາສະຖິດຢູ່ກັບເຈົ້າທັງຫລາຍ”*

ຫລັງຈາກພຣະເຈົ້າປຸກເຂົາເຈົ້າໃຫ້ຕື່ນຂຶ້ນ, ປະຊາຊົນເຊື່ອຟັງພຣະອົງ! ພຣະເຈົ້າເຮັດໃຫ້ດິນທີ່ແຫ້ງແລ້ງເກີດຜົນລະປູກ, ພຣະເຈົ້າໃຫ້ເຂົາເຈົ້າບໍ່ພໍໃຈກັບການເຮັດງານຂອງເຂົາເຈົ້າ, ແລະພຣະເຈົ້າໄດ້ສົ່ງຮັກກາຍໄປເວົ້າກັບເຂົາເຈົ້າຢ່າງຄັກແນ່ແລະອະທິບາຍຕໍ່ເຂົາເຈົ້າເຣື່ອງຄວາມບາບແລະຄວາມລົ້ມເຫລວຂອງເຂົາເຈົ້າ. ປະຊາຊົນເຊື່ອຟັງພຣະເຈົ້າແລະຕອບສນອງພຣະອົງດ້ວຍການເຊື່ອຟັງຢ່າງແທ້ຈິງ.

ການຕອບສນອງຂອງເຂົາເຈົ້າແມ່ນຫຼາຍກວ່າການເຊື່ອຟັງພາຍນອກ. ຂໍ້ 12 ກ່າວວ່າ "ປະຊາຊົນກໍຢຳເກງອົງຜູ້ເປັນເຈົ້າພຣະເຈົ້າຂອງເຂົາ." ສັງເກດຂໍ້ຄວາມສຸດທ້າຍທີ່ວ່າ:"ພຣະເຈົ້າຂອງເຂົາ." ໃນຂໍ້ພຣະຄຳທີ່ຜ່ານມາ, ພຣະເຈົ້າໄດ້ເອີ້ນເຂົາເຈົ້າວ່າ "ປະຊາຊົນເຫຼົ່ານີ້" ( ຂໍ້ 2 ) ຊຶ່ງສະແດງໃຫ້ເຫັນວ່າເຂົາເຈົ້າໄດ້ຂາດຄວາມໃກ້ຊິດກັບພຣະເຈົ້າຜ່ານການບໍ່ເຊື່ອຟັງຂອງເຂົາເຈົ້າ. ແຕ່ບັດນີ້ເຂົາເຈົ້າໄດ້ຫັນກັບມາຫາພຣະເຈົ້າຂອງເຂົາເຈົ້າ. ເຂົາເຈົ້າໄດ້ສແວງຫາທັງການເຊື່ອຟັງແລະການປົວແປງຄວາມສັມພັນຂຶ້ນໃໝ່.

ຜົນຂອງການເຊື່ອຟັງຂອງເຂົາເຈົ້າ. ພຣະເຈົ້າໄດ້ໃຫ້ສັນຍາອັນຍິ່ງໃຫຍ່: " ເຮົາສະຖິດຢູ່ກັບເຈົ້າ." ອົງພຣະຜູ້ເປັນເຈົ້າໄດ້ສ້າງຄວາມສັມພັນຂຶ້ນໃໝ່ໃນທັນທີໂລດກັບປະຊາຊົນເມື່ອເຂົາເຈົ້າຫັນກັບມາຫາພຣະອົງ. ເໝືອນກັບຜູ້ທີ່ຕິດຕາມພຣະອົງໃນທຸກວັນນີ້. ເມື່ອພວກເຮົາເຮັດໃຫ້ພຣະປະສົງຂອງພຣະເຈົ້າເປັນທີນຶ່ງໃນຊີວິດຂອງພວກເຮົາ, ພຣະອົງກໍສະຖິດຢູ່ກັບເຮົາ. ຄຳສັນຍາອັນຍິ່ງໃຫຍ່ຂອງພຣະເຈົ້າແມ່ນ "ເຮົາຈະບໍ່ປະເຈົ້າ ຫລືຖິ້ມເຈົ້າເສັຽຈັກເທື່ອ."(ຮຣ 13:5).

ຖ້າທ່ານອ່ານຕໍ່ໃນຂໍ້14, ທ່ານຈະເຫັນວ່າການຊົງສະຖິດຂອງພຣະເຈົ້າບໍ່ແມ່ນແຕ່ຢູ່ໃນຫ້ອງກັບເຂົາເຈົ້າເທົ່ານັ້ນ. ແຕ່ພຣະອົງ "ຊົງປຸກລຸກຈິດວິນຍານ" ຂອງປະຊາຊົນແລະໃຫ້ເຂົາເຈົ້າສຸມໃຈໃສ່ການສ້ອມແປງພຣະວິຫານຂຶ້ນໃໝ່. ການປ່ຽນແປງນີ້ບໍ່ແມ່ນການນຳພາແຮງກະຕຸ້ນໃຈໃນທາງທີ່ຜິດ. ເຂົາເຈົ້າໄດ້ຍິນສຽງໂມງປຸກຂອງພຣະເຈົ້າ. ພຣະອົງປຸກໃຫ້ເຂົາເຈົ້າຕື່ນອອກຈາກຄວາມເຫັນແກ່ຕົວແລະເຂົາເຈົ້າໄດ້ຕອບສນອງພຣະອົງດ້ວຍຄວາມຈິງໃຈ.

ພຣະເຈົ້າຢູ່ໃສໃນຊີວິດຂອງທ່ານດຽວນີ້? ພຣະອົງເປັນທີນຶ່ງຂອງທ່ານບໍ່? ຖ້າບໍ່, ແມ່ນຫຍັງທີ່ເປັນທີນຶ່ງນອກເໜືອໄປຈາກພຣະອົງ? ທ່ານຈະບໍ່ມີຄວາມເພິ່ງພໍໃຈໃນຊີວິດຂອງທ່ານເທື່ອ ຈົນກວ່າພຣະເຈົ້າຈະເປັນທີນຶ່ງໃນຊີວິດຂອງທ່ານ. ແທ້ຈິງແລ້ວ, ດຽວນີ້ພຣະເຈົ້າອາດຈະພະຍາຍາມຮຽກຮ້ອງຄວາມສົນໃຈຈາກທ່ານ. ພຣະເຈົ້າຊົງສັນຍາຈະໃຫ້ທຸກສິ່ງທີ່ຈຳເປັນແກ່ທ່ານ ຖ້າພຣະອົງເປັນທີນຶ່ງໃນຊີວິດຂອງທ່ານ. ຫລາຍກວ່ານັ້ນອີກ ພຣະເຈົ້າຊົງສັນຍາວ່າພຣະອົງຈະຊົງສະຖິດຢູ່ກັບທຸກຄົນຜູ້ໃຫ້ພຣະອົງເປັນທີນຶ່ງ.

## ນຳໃຊ້ໃນຊີວິດ.

**ທ່ານຈະໃຫ້ພຣະເຈົ້າຢູ່ອັນດັບນຶ່ງໃນຊີວິດຂອງທ່ານຢ່າງໃດໃນອາທິດນີ້? ຈົ່ງພິຈາຣະນາເບິ່ງຄຳແນະນຳນີ້.**

- **ໝາຍວັນທີໄວ້.** ຂຽນວັນທີຂອງມື້ນີ້ໃນພຣະຄັມພີຂອງທ່ານຕໍ່ຈາກບົດທີນຶ່ງໃນພຣະທັມຮັກກາຍ. ອະທິຖານຂໍໃຫ້ພຣະເຈົ້າເຮັດໃຫ້ວັນນີ້ເປັນຈຸດຫັນປ່ຽນຂອງຈິດວິນຍານ ເມື່ອສິ່ງທີ່ເປັນນຶ່ງໃນຊີວິດທ່ານໄດ້ປ່ຽນໄປໃນທາງທີ່ດີກວ່າເກົ່າ.
- **ອະທິຖານທຸກໆວັນ.** ຈັດເວລາໄວ້ແຕ່ລະວັນສຳລັບອະທິຖານກັບພຣະເຈົ້າຈັກຫ້ານາທີ, ໃນລະວ່າງເວລາອະທິຖານຂອງທ່ານ, ທູນຕໍ່ພຣະເຈົ້າໃຫ້ສຳແດງກັບທ່ານວ່າພຣະອົງເປັນທີນຶ່ງຂອງທ່ານສຳລັບວັນນັ້ນຢ່າງໃດ.
- **ຮັບໃຊ້.** ຄວາມເປັນພຣະເຈົ້າຂອງພຣະຄຣິດຈະເປັນທີນຶ່ງ ແມ່ນຂຶ້ນຢູ່ກັບວ່າທ່ານຮັບໃຊ້ພຣະອົງຢ່າງໃດ. ມີສ່ວນຮ່ວມໃນການໃຊ້ຊີວິດທີ່ຄຣິສຕະຈັກເພື່ອນະມັສການແລະຮັບໃຊ້ພຣະຄຣິດ ໂດຍການຮັບໃຊ້ຄົນອື່ນ.

ເມື່ອທ່ານເຫັນແຖວທີ່ຍາວຢຽດ, ການລອງໃຈຈະເກີດຂຶ້ນ ຄືການຕັດແຖວທາງໜ້າ. ຢ່າງໃດກໍຕາມ ຈະບໍ່ມີການຕັດແຖວກັບພຣະເຈົ້າ. ທ່ານບໍ່ສາມາດສ້າງທາງລັດໃນການເຕີບໂຕຝ່າຍຈິດວິນຍານ. ເພື່ອຈະເຕີບໂຕພວກເຮົາຕ້ອງມີຄວາມກະຕືລືລົ້ນແລະມີວິນັຍ. ພຣະເຈົ້າຕ້ອງເປັນທີນຶ່ງກ່ອນສິ່ງອື່ນໝົດໃນຊີວິດຂອງເຮົາ.

**ອຸປັຖັມໂດຍລາວຊາວເທີນບັບຕິດສັມພັນ www.lsbf.org ແປໂດຍ VR.**